# ກະຣຸນາຊ່ວຍເຫລືອພວກເຮົາ
# ໃຫ້ຮັບໃຊ້ທ່ານໄດ້ດີກວ່າເກົ່າ

ພວກເຮົາພະຍາຍາມຢ່າງຫນັກຕະລອດ
ເວລາທີ່ຈະເຮັດໃຫ້ດີຂື້ນ, ບໍ່ກ່ຽວວ່າຈະ
ມີຄວາມພະຍາຍາມໄດ້ດີທີ່ສຸດຂອງພວກເຮົ
າເທົ່າໃດ, ບັນຫາຍັງສາມາດເກີດຂື້ນໄດ້ຢູ່.
ຖ້າຫາກວ່າທ່ານມີຄວາມຂ້ອງໃຈ
ຫລື ຄຳຮ້ອງທຸກແນວໃດທີ່ທ່ານໄດ້ຮັບ,
ພວກເຮົາຕ້ອງການຢາກຈະໄດ້ຍິນ
ຂ່າວຈາກທ່ານ.

## ຫ້ອງການ **DDA** ຕັ້ງຢູ່ໃສ?




**ຫ້ອງຖິ່ນ 1**
**1-800-462-0624**
TTY (509) 568-3038
1611 W. Indiana Ave.
Spokane, WA 99205-4221
ໂທຣະສັບ (509) 329-2900

**ຫ້ອງຖິ່ນ 2**
**1-800-788-2053**
TTY (360) 714-5002
840 N. Broadway
Bldg. A., Suite 100
Everett, WA 98201-1288
ໂທຣະສັບ (425) 339-4833

**ຫ້ອງຖິ່ນ 3**
**1-800-248-0949**
TTY (253) 572-7381
1305 Tacoma Ave. S.
Suite 300
Tacoma, WA 98402
ໂທຣະສັບ (253) 404-5500

**ຫ້ອງຖິ່ນ 1**
**1-800-822-7840**
TTY (509) 454-4321
3700 Fruitvale Blvd.
Suite 200
Yakima, WA 98909-2500
ໂທຣະສັບ (509) 225-4620

**ຫ້ອງຖິ່ນ 2**
**1-800-314-3296**
TTY (206) 720-3325
1700 E. Cherry St. #200
Seattle, WA 98122
ໂທຣະສັບ (206) 568- 5700

**ຫ້ອງຖິ່ນ 3**
**1-800-339-8227**
TTY (360) 586-4719
Point Plaza East
Bldg. 2, 3rd Floor
6860 Capitol Blvd. SE
Olympia, WA 98504-5315
ໂທຣະສັບ (360) 725-4250


Washington State
Department of Social & Health Services
Transforming lives

DSHS 22-1113 LA (Rev. 10/17) Laotian


# ມະໂນບາຍການ ຮ້ອງທຸກສຳລັບຜູ້ຮັບ ການຊ່ວຍເຫລືອ

*ພວກເຮົາຕ້ອງການຢາກ*
*ໄດ້ຍິນຂ່າວຈາກທ່ານ.*




Washington State
Department of Social & Health Services
Transforming lives

## ຄໍາຮ້ອງທຸກແນວໃດແດ່ທີ່ DDA ຈະຊ່ວຍຂ້າພະເຈົ້າແກ້ໄຂ?

ພະແນກ Developmental Disabilities Administration (DDA) ຈະຊ່ວຍເຫລືອແກ້ໄຂຄໍາຮ້ອງທຸກກ່ຽວກັບການບໍລິການ ແລະ ພະນັກງານທີ່ໃຫ້ການບໍລິການສໍາລັບທ່ານ ຫລື ສະມາຊິກຄອບຄົວ ຂອງທ່ານ. ຄໍາຮ້ອງທຸກຈະຖືກສົ່ງໄປຫາຜູ້ຈັດການຊ່ວຍເຫລືອເອກສານ/ພະນັກ ງານສັງຄົມກ່ອນ, ນອກຈາກວ່າຖືກຮ້ອງຂໍໃຫ້ຖືກເກັບກໍາໂດຍຄົນໃດ ຄົນນຶ່ງອີກ.

### ຈະເຮັດແນວໃດຖ້າຫາກວ່າທ່ານມີຄໍາຮ້ອງທຸກ

1. ໂທຫາຜູ້ຈັດການຊ່ວຍເຫລືອເອກສານ/ພະນັກງານສັງຄົມຂອງທ່ານ ແລະ ບອກເຂົາເຈົ້າວ່າທ່ານຕ້ອງການທໍາການຮ້ອງທຸກ.
2. ຖ້າຫາກວ່າຜູ້ຈັດການຊ່ວຍເຫລືອເອກສານ/ພະນັກງານສັງຄົມຂອງທ່ານບໍ່ສາມາດຊ່ວຍເຫລືອທ່ານໄດ້ພາຍໃນ 10 ວັນເຮັດການ, ເຂົາເຈົ້າຈະສະເນີໃຫ້ຜູ້ຄວບຄຸມງານຊ່ວຍເຫລືອ.
3. ຖ້າຫາກວ່າຜູ້ຄວບຄຸມງານບໍ່ສາມາດທີ່ຈະແກ້ໄຂຄວາມຂ້ອງໃຈຂອງທ່ານພາຍໃນ 10 ວັນເຮັດການ,ເຂົາເຈົ້າຈະຖາມທ່ານວ່າທ່ານຢາກຈະທໍາການເຮັດຄໍາຮ້ອງທຸກເປັນທາງການ ຫລື ບໍ່.
4. ເພື່ອຈະທໍາການເຮັດຄໍາຮ້ອງທຸກເປັນທາງການ, ຜູ້ຄວບຄຸມງານຈະຊ່ວຍເຫລືອທ່ານຕິດຕໍ່ຫາຫ້ອງການຜູ້ປົກຄອງທ້ອງຖິ່ນຂອງ DDA.

### ການບໍ່ແບ່ງແຍກຊົນຊັ້ນວັນນະ

ມັນເປັນນະໂຍບາຍຂອງກົມ DSHS ທີ່ບຸກຄົນຈະບໍ່ຖືກແບ່ງແຍກຊົນຊັ້ນວັນນະໃສ່ (ໃນວຽກງານ ຫລື ການຝຶກຝົນ) ຍ້ອນວ່າຜິວພັນ, ສີສັນ, ຄວາມເຊື່ອຖືທາງສາສະນາ, ສາສະນາ, ເຊື້ອຊາດດັ້ງເດີມ, ຄວາມອຸ່ນອ່ຽງທາງເພດ, ອາຍຸ, ເພດ, ການປາກົດມີຄວາມເສັຽອົງຄະທາງຄວາມຮູ້ສຶກ, ຈິດໃຈ ຫລື ຮ່າງກາຍແນວໃດແນວນຶ່ງ, ການໃຊ້ຫມານໍາທາງ ຫລື ສັດບໍລິການທີ່ຖືກຝຶກຝົນມາໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ, ຫລື ສະພາບນັກຮົບເກົ່າ.

ເພື່ອລາຍລະອຽດເພີ້ມເຕີມ,
ແວ່ເຂົ້າຢ້ຽມແວບໄຊທ໌ຂອງ **DDA** ໄດ້ທີ່:

**www.dshs.wa.gov/dda**

## ການດໍາເນີນການຮ້ອງທຸກເປັນທາງການ

1. ເມື່ອເວລາທ່ານໂທຫາ ຫລື ສົ່ງຫນັງສືຄໍາຮ້ອງເຂົ້າມາຫາຫ້ອງການ DDA ທ້ອງຖິ່ນ, ທ່ານຈະໄດ້ຍິນຂ່າວກັບຄືນຈາກບຸກຄົນທີ່ຖືກ ແຕ່ງຕັ້ງໃຫ້ຊ່ວຍເຫລືອທ່ານນໍາຄໍາຮ້ອງທຸກຂອງທ່ານ.
2. ຖ້າຫາກວ່າບຸກຄົນນັ້ນບໍ່ສາມາດທີ່ຈະແກ້ໄຂຄໍາຮ້ອງທຸກຂອງທ່ານພາຍ ໃນ 10 ວັນເຮັດການ, ເຂົາເຈົ້າຈະຖາມທ່ານວ່າທ່ານຢາກໃຫ້ຄໍາຮ້ອງທຸກຂອງທ່ານຖືກສົ່ງຕໍ່ໄປຫາສູນກາງຂອງ DDA ຫລື ບໍ່ ເພື່ອການແກ້ໄຂບັນຫາຂັ້ນສຸດທ້າຍ.
3. ເພື່ອຈະສົ່ງຄໍາຮ້ອງທຸກຂອງທ່ານໄປຫາສູນກາງຂອງ DDA, ບໍ່ວ່າຈະແມ່ນຫ້ອງການທ້ອງຖິ່ນຈະສົ່ງລາຍລະອຽດໄປຫາຫ້ອງການ Office of Quality Programs and Services, ຫລືວ່າທ່ານຈະໂທໄປຫາໂດຍກົງໂລດ.
4. ຫ້ອງການ Office of Quality Programs and Services ຈະກວດເບິ່ງຄວາມຂ້ອງໃຈຄືນ, ທໍາການພິຈາລະນາຕັດສິນ, ແລະ ຕິດຕໍ່ໄປຫາທ່ານພ້ອມທັງຄໍາຕັດສິນຂັ້ນສຸດທ້າຍ.

ກົມ Department of Social and Health Services ທໍ່ຫຸ້ມດ້ວຍຫລາຍໆພະແນກການປົກຄອງທີ່ຖືກຜູກພັນໂດຍວັດຖຸ ປະສົງຢ່າງດຽວ: ເພື່ອຈະປ່ຽນແປງຊີວິດ. ເພື່ອຈະເຮັດອັນນັ້ນ, ພະແນກ Developmental Disabilities Administration ຂອງອົງການຈະມຸ່ງຫມາຍໃສ່ການໃຫ້ການອູ້ມຊູ ແລະ ການສົ່ງເສີມການປະສານງານຮ່ວມມືກັນຊຶ່ງຈະໃຫ້ພະລັງປະຊາຊົນທີ່ຈະດໍາຣົງຊີວິດຕາມທີ່ເຂົາເຈົ້າຕ້ອງການ.



## ມັນຍັງມີ ຫົນທາງແນວອື່ນອີກທີ່ຈະໃຫ້ຄວາມຂ້ອງໃຈຂອງທ່ານຖືກຮັບຮູ້.

- ຖ້າຫາກວ່າທ່ານສົງສັຍວ່າມີການກົດຂີ່ຂົ່ມເຫັງ, ການປ່ອຍປະລະເລີຍ ຫລື ການສວຍໂອກາດທາງການເງິນ ຂອງເດັກນ້ອຍ ຫລື ຜູ້ໃຫຍ່ອ່ອນແອ, ໂທຫາ **1-866-363-4276 (1-866-END-HARM)** ໂດຍທັນທີໂລດ ແລະ ລາຍລະອຽດຂອງທ່ານຈະຖືກສົ່ງຕໍ່ໄປຫາພະນັກງານເຫມາະສົມ.
- ຖ້າຫາກວ່າທ່ານມີຄໍາຮ້ອງທຸກກ່ຽວກັບສະຖານທີ່ເບິ່ງແຍງຄົນແກ່ ຊາຣາ ຫລື ຄົນບໍ່ແຂງແຮງ, ໂທຫາຫນ່ວຍ Complaint Resolution Unit ໄດ້ທີ່ເລກ **1-800-562-6078**.
- ຖ້າຫາກວ່າທ່ານມີຄໍາຮ້ອງທຸກກ່ຽວກັບເຮືອນຄອບຄົວຜູ້ໃຫຍ່, ເຮືອນຢູ່ທີ່ ຖືກຊ່ວຍເຫລືອ ຫລື ເຮືອນຢູ່ເປັນກຸ່ມ, ໂທຫາ Long Term Care Ombudsman ໄດ້ທີ່ເລກ **1-800-562-6028**.
- ຖ້າຫາກວ່າທ່ານມີຄໍາຮ້ອງທຸກກ່ຽວກັບສູນກາງ DDA Residential Habilitation Center (RHC) ຫລື State Operated Living Alternatives (SOLA), ໂທຫາຫ້ອງການທ້ອງຖິ່ນຂອງ DDA.
- ຖ້າຫາກວ່າທ່ານມີຄໍາຮ້ອງທຸກກ່ຽວກັບຄົນໃດຄົນນຶ່ງຜູ້ທີ່ແລກປ່ຽນ ລາຍລະອຽດກ່ຽວກັບສຸຂະພາບຂອງທ່ານ, ຈົ່ງຕິດຕໍ່ຫາ:

**DSHS Privacy Officer**
Office of the Secretary
PO Box 45115
Olympia WA 98504-5115